# ມິຊຊາອາທິດທີ 30 ການົດທຳມະດາ ປີ B
## ວັນອາທິດທີ 28 ຕຸລາ 2018



**ພຣະວໍລະສານໂດຍນັກບຸນມາກໂກ 10, 46-52**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າສະເດັດອອກຈາກເມືອງເຢຣີໂກພ້ອມດ້ວຍສາວົກ ແລະຝູງຊົນເປັນຈຳນວນມາກ ກໍມີຄົນຕາບອດຜູ້ໜຶ່ງ ບຸດຂອງຕີເມນັ່ງຂໍທານຢູ່ແຄມທາງ. ພໍຮູ້ວ່າແມ່ນພຣະເຢຊູຊາວນາຊາແລັດເຂົາກໍຮ້ອງຂຶ້ນວ່າ: ເຢຊູ, ບຸດພຣະຍາດາວິດ, ສົງສານຂ້ານ້ອຍທ້ອນ! ມີຫລາຍຄົນຕິບອກເຂົາໃຫ້ມິດ ແຕ່ເຂົາແຮງຮ້ອງຂຶ້ນດັ່ງກວ່າອີກ: ບຸດພຣະຍາດາວິດເອີຍ, ສົງສານຂ້ານ້ອຍທ້ອນ! ພຣະເຢຊູເຈົ້າຊົງຢຸດແລະກ່າວວ່າ: ຈົ່ງເອີ້ນເຂົາມາ.

ເລີຍມີຄົນເອີ້ນເອົາຄົນຕາບອດແລະບອກເຂົາວ່າ: ຈົ່ງມີຄວາມໄວ້ໃຈ, ລຸກຂຶ້ນເຖີດ. ພຣະອົງເອີ້ນເຈົ້າ. ຄົນຕາບອດແກວ່ງເສື້ອຍ່າມຖິ້ມ ແລ້ວໂດດຂຶ້ນແລ່ນໄປຫາພຣະເຢຊູເຈົ້າ. ພຣະອົງຖາມເຂົາວ່າ: ເຈົ້າຢາກໃຫ້ເຮົາທຳສິ່ງໃດແກ່ເຈົ້າ? ຄົນຕາບອດຕອບວ່າ: ພຣະອາຈານເອີຍ, ໂຜດໃຫ້ຂ້ານ້ອຍໄດ້ເຫັນຮຸ່ງ. ພຣະເຢຊູເຈົ້າກ່າວວ່າ: ໄປເສຍ, ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າໃຫ້ດີແລ້ວ. ທັນທີຄົນນັ້ນກໍແນມເຫັນ ແລະເດີນທາງຕິດຕາມພຣະເຢຊູເຈົ້າໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 10, 46-52**

ຖ້າພວກເຮົາຟັງວາຈາຂອງພຣະເຈົ້າໃນວັນນີ້ດ້ວຍຄວາມຕັ້ງໃຈກໍຈະເຫັນວ່າບໍ່ພຽງແຕ່ທັດສະນະທ່າທີຂອງຄົນຕາບອດບຸດຂອງຕີເມມີຄວາມປ່ຽນແປງໃນຕອນທ້າຍຂອງພຣະວໍລະສານ ແຕ່ຊີວິດຂອງເຂົາກໍໄດ້ຜັນປ່ຽນເຊັ່ນດຽວກັນຍ້ອນເຂົາໄດ້ເຫັນພຣະເຢຊູເຈົ້າແລະເຊື່ອໃນພຣະອົງ.

ກ່ອນທີ່ຄົນຕາບອດໄດ້ພົບພຣະເຢຊູເຈົ້າ ເຂົາເປັນຄົນຂໍທານ, ນັ່ງຢູ່ຂ້າງຖະໜົນບໍ່ໄດ້ຮັບຄວາມສົນໃຈຈາກສັງຄົມໃນເວລານັ້ນ. ແຕ່ຊີວິດຂອງເຂົາເລີ່ມມີຄວາມຫວັງກໍຕໍ່ເມື່ອເຂົາຮູ້ວ່າເຢຊູຊາວນາຊາແລັດຜ່ານມາທາງນັ້ນ. ແລະຄວາມຫວັງນີ້ທຳໃຫ້ເຂົາຮ້ອງຂຶ້ນວ່າ: ເຢຊູ, ບຸດພຣະຍາດາວິດ, ສົງສານຂ້ານ້ອຍທ້ອນ! ສຽງຮ້ອງນີ້ອາດຈະສ້າງຄວາມລຳຄານໃຫ້ກັບຝູງຊົນທີ່ຕິດຕາມພຣະເຢຊູເຈົ້າມາ. ແຕ່ສຽງຮ້ອງເຕັມດ້ວຍຄວາມຫວັງນີ້ເໝືອນຢາກຈະບອກກັບຜູ້ອ່ານພຣະວໍລະສານວ່າ ເຖິງວ່າຄົນຕາບອດນີ້ຈະບໍ່ເຫັນຮຸ່ງດ້ວຍສາຍຕາໃນຄວາມເປັນມະນຸດ ແຕ່ເຂົາເຫັນແຈ້ງເຖິງຕົວຕົນທີ່ແທ້ຈິງຂອງພຣະເຢຊູເຈົ້າດ້ວຍສາຍຕາແຫ່ງຄວາມເຊື່ອ. ສິ່ງນີ້ທຳໃຫ້ເຂົາມີຄວາມແຕກຕ່າງຈາກຝູງຊົນທີ່ຕິດຕາມພຣະເຢຊູເຈົ້າມາ ເຖິງວ່າພວກເຂົາບໍ່ໄດ້ຕາບອດແຕ່ພວກເຂົາກໍບໍ່ເຫັນພຣະເຢຊູເຈົ້າຢ່າງແທ້ຈິງ.

ເມື່ອຄົນຕາບອດໄດ້ພົບພຣະເຢຊູເຈົ້າ, ພຣະອົງກໍຖາມເຂົາວ່າ: ເຈົ້າຢາກໃຫ້ເຮົາທຳສິ່ງໃດແກ່ເຈົ້າ? ຄຳຖາມນີ້ຢາກຄ້າຍຄືກັບຄຳຖາມທີ່ຢາໂກເບແລະຢວງບຸດຂອງເຊເບເດໄດ້ໃຊ້ເພື່ອຖາມພຣະເຢຊູເຈົ້າກ່ຽວກັບເລື່ອງນັ່ງຢູ່ເບື້ອງຂວາແລະເບື້ອງຊ້າຍຂອງພຣະອົງໃນສິນຸງຄຸນ. ແຕ່ສິ່ງທີ່ຄົນຕາບອດຂໍພຣະເຢຊູເຈົ້າໃນວັນນີ້ບໍ່ແມ່ນຄວາມຮັ່ງມີ ,ບໍ່ແມ່ນຖານະໃນສັງຄົມ ແຕ່ເຂົາຢາກເຫັນຮຸ່ງ. ຄວາມຮຸ່ງແຈ້ງທີ່ຄົນຕາບອດນີ້ຂໍອາດຈະບໍ່ແມ່ນພຽງແຕ່ດ້ານສາຍຕາເທົ່ານັ້ນ ແຕ່ແມ່ນຄວາມຮຸ່ງແຈ້ງແຫ່ງຄວາມເຊື່ອໃນພຣະເຢຊູເຈົ້າຜູ້ເຂົາຮຽກວ່າອາຈານນີ້ອີກດ້ວຍ. ເພາະພຣະເຢຊູເຈົ້າກ່າວແກ່ຄົນຕາບອດນີ້ວ່າ: ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າໃຫ້ດີແລ້ວ. ທັນທີນັ້ນ, ຄົນຕາບອດກໍເຫັນຮຸ່ງແລະຕິດຕາມພຣະເຢຊູເຈົ້າໄປ.

ການຕິດຕາມພຣະເຢຊູເຈົ້າເພື່ອມຸ່ງສູ່ນະຄອນເຢລູຊາແລມບ່ອນທີ່ພຣະອົງຈະຕ້ອງຮັບທໍລະມານແລະຕາຍນີ້ສະແດງວ່າຄົນຕາບອດເຫັນຮຸ່ງນີ້ຢາກເປັນລູກສິດຂອງພຣະເຢຊູເຈົ້າແລະຢາກມີສ່ວນຮ່ວມໃນຄວາມທໍລະມານແລະຕາຍຮ່ວມກັບພຣະອົງ. ເຖິງຢ່າງນັ້ນກໍດີ, ພຣະວໍລະສານກໍບໍ່ໄດ້ບອກລາຍລະອຽດໃຫ້ພວກເຮົາຮູ້ກ່ຽວກັບຄົນຕາບອດເຫັນຮຸ່ງນີ້. ແຕ່ສິ່ງທີ່ພວກເຮົາສາມາດເຫັນໄດ້ຜ່ານທາງຄົນຕາບອດນີ້ຄືຄວາມຜັນປ່ຽນຊີວິດຂອງເຂົາເມື່ອພົບກັບພຣະເຢຊູເຈົ້າ. ຈາກຄົນຕາບອດ ມາເປັນຄົນເຫັນຮຸ່ງ. ຈາກຄົນຂໍທານນັ່ງຢູ່ແຄມຖະໜົນມາເປັນລູກສິດແລະເດີນຕາມພຣະເຢຊູເຈົ້າໄປ.

ເມື່ອເຫັນສະພາບຊີວິດທີ່ປ່ຽນແປງຂອງຄົນຕາບອດເຫັນຮຸ່ງນີ້ ພວກເຮົາອາດຖາມຕົວເອງວ່າ: ຊີວິດຂອງຂ້ອຍຕັ້ງແຕ່ມື້ຂ້ອຍໄດ້ເປັນລູກຂອງພຣະເຈົ້າຈົນເຖິງວັນນີ້ໄດ້ມີການປ່ຽນແປງຫຍັງບໍ? ເຖິງວ່າຂ້ອຍຈະບໍ່ເປັນຄົນຕາບອດແຕ່ຂ້ອຍໄດ້ເຫັນພຣະເຢຊູເຈົ້າເຂົ້າມາໃນຊີວິດຂອງຂ້ອຍບໍ? ເມື່ອພົບພຣະເຢຊູເຈົ້າແລ້ວຂ້ອຍຈະຂໍຫຍັງກັບພຣະອົງ? ແລະສິ່ງທີ່ຂ້ອຍຂໍນີ້ມີຜົນປະໂຫຍດຫຍັງຕໍ່ຊີວິດຄວາມເຊື່ອແລະຊີວິດແຫ່ງການເປັນລູກສິດຂອງພຣະເຢຊູເຈົ້າ?

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍເປີດຕາແຫ່ງຄວາມເຊື່ອຂອງພວກເຮົາເພື່ອພວກເຮົາຈະໄດ້ພົບແລະເຫັນພຣະເຢຊູເຈົ້າເໝືອນດັ່ງຄົນຕາບອດບຸດຂອງຕີເມໃນວັນນີ້ເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ